


ພະແນກຄຸ້ມຄອງສະຖາບັນການເງິນ

# ການຊ່ວຍເຫຼືອດ້ານວິຊາການໃຫ້ແກ່ກອງທຶນບ້ານ ຫົວຂໍ້:

## "ການຄຸ້ມຄອງບໍລິຫານຂອງຄະນະສະພາບໍລິຫານສະຖາບັນການເງິນຈຸລະພາກ, ການຄວບຄຸມພາຍໃນ ແລະ ຕ້ານການສໍ້ໂກງຂົງເຂດວຽກງານສະຖາບັນການເງິນ" ໃຫ້ຄະນະບໍລິຫານກອງທຶນບ້ານໂນນສົມບູນ, ບ້ານນາໂອ, ບ້ານນາລ້ອງ ເມືອງບໍລິຄັນ ໃນລະຫວ່າງວັນທີ 15-17 ພະຈິກ 2017







ຮູບພາບ 01 ການນຳສະເໜີບົດຮຽນໃນການຄຸ້ມຄອງບໍລິການ ແລະ ວຽກງານຕ້ານການສໍ້ໂກງ



**ຮູບພາບ 02 ຜູ່ເຂົ້າຮ່ວມ**

**ຕອນເຊົ້າຂອງວັນທີ 15 ພະຈິກ 2017** ສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ ພະແນກຄຸ້ມຄອງສະຖາບັນການເງິນ ຈັດຕັ້ງປະຕິບັດເຄື່ອນໄຫວວຽກງານການຊ່ວຍເຫຼືອທາງດ້ານວິຊາການໃຫ້ຄະນະບໍລິຫານກອງທຶນບ້ານ ມີຫົວຂໍ້ເຊັ່ນ: **ການຄຸ້ມຄອງບໍລິຫານຂອງຄະນະສະພາບໍລິຫານສະຖາບັນການເງິນຈຸລະພາກ, ການຄວບຄຸມພາຍໃນ ແລະ ຕ້ານການສໍ້ໂກງໃນຂົງເຂດວຽກງານສະຖາບັນການເງິນ/ກອງທຶນບ້ານ** ມີຜູ່ເຂົ້າຮ່ວມມາຈາກພາກສ່ວນເປັນຕົ້ນ: ສະພາປະຊາຊົນຂັ້ນແຂວງບໍລິຄໍາໄຊເຂົ້າຮ່ວມສັງເກດການ, ວິຊາການຫ້ອງການກະສິກໍາ-ປ່າໄມ້ເມືອງບໍລິຄັນ ແລະ ຄະນະບໍລິຫານກອງທຶນບ້ານ 03 ບ້ານ (ບ້ານໂນນສີມບູນ, ບ້ານນາໂອ ແລະ ບ້ານນາລ້ອງ) ລວມທັງໝົດ 19 ທ່ານ, ຍິງ 08 ທ່ານ. ການລົງຊ່ວຍເຫຼືອດ້ານວິຊາການຄັ້ງນີ້ ຜູ່ເຂົ້າຮ່ວມໄດ້ມີຄໍາຖາມແລກປ່ຽນຢ່າງກົງໄປກົງມາມີບັນຍາກາດດີ, ພາຍຫຼັງການນໍາສະເໜີ ແລະ ມີຄໍາຖາມແລກປ່ຽນແລ້ວ ຄະນະຮັບຜິດຊອບໃນການລົງຊ່ວຍເຫຼືອດ້ານວິຊາການໃນຄັ້ງນີ້ ໄດ້ເອົາແບບຢ່າງ ແລະ ແບບຟອມອື່ນໆໃຫ້ຜູ່ເຂົ້າຮ່ວມໄປທົດລອງນໍາໃຊ້ເຂົ້າໃນວຽກງານບໍລິຫານກອງທຶນບ້ານຕົວຈິງເປັນຕົ້ນ: ຮ່າງກົດລະບຽບພາຍໃນຂອງສະຖາບັນການເງິນຈຸລະພາກ, ຕົວຢ່າງແຜນການຊໍາລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ ແບບສະເໝີ ແລະ ແບບຫຼຸດລົງ, ຕາຕະລາງຕົວຢ່າງການຕິດຕາມເງິນກູ້, ຕາຕະລາງຕົວຢ່າງຄິດໄລ່ເງິນປັນຜົນ ແລະ ອື່ນໆ ໃຫ້ພະນັກງານຜູ່ຮັບຜິດຊອບຊີ້ນໍາກອງທຶນບ້ານ, ຄະນະບໍລິຫານກອງທຶນບ້ານ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອເປັນພື້ນຖານໃນການຊີ້ນໍາໆພາໃນຂົງເຂດວຽກງານສະຖາບັນການເງິນ ກໍຄື ກອງທຶນບ້ານ.

**ຕອນເຊົ້າຂອງວັນທີ 16 ພະຈິກ 2017** ສະພາປະຊາຊົນຂັ້ນແຂວງ, ຮອງປະທານສະຫະພັນແມ່ຍິງແຂວງ ແລະ ພະແນກຄຸ້ມຄອງສະຖາບັນການເງິນ ເຄື່ອນໄຫວຢ້ຽມຢາມ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກພັດທະນາແມ່ຍິງ ແລະ ຄອບຄົວໜ່ວຍບໍລິການເມືອງທ່າພະບາດ ແຂວງບໍລິຄໍາໄຊ ສ້າງຕັ້ງຂຶ້ນ 22 ຕຸລາ 2009 ເປັນໜ່ວຍບໍລິການແຫ່ງທໍາອິດຂອງສະຖາບັນການເງິນ ໃນເບື້ອງຕົ້ນໃຫ້ບໍລິການພຽງແຕ່ 02 ບ້ານ, ມາຮອດປະຈຸບັນໜ່ວຍບໍລິການເມືອງທ່າພະບາດ ໃຫ້ບໍລິການ 15

ບ້ານ ມີສະມາຊິກທັງໝົດ 1.620 ຄົນ, ສະມາຊິກທີ່ເປັນເຍົາວະຊົນ 453 ຄົນ, ມີສະມາຊິກຜູ້ກູ້ຢືມເງິນ 507 ຄົນ ມູນຄ່າ 2.587.483.000 ກີບ.



**ຮູບພາບ 03** ຢ້ຽມຢາມ ສກຈຮ ພັດທະນາແມ່ຍິງ ແລະ ຄອບຄົວ ໜ່ວຍບໍລິການເມືອງທ່າພະບາດ ແຂວງບໍລິຄຳໄຊ

**ໃນຕອນເຊົ້າຂອງວັນທີ 17 ພະຈິກ 2017** ສະພາປະຊາຊົນຂັ້ນແຂວງ, ຮອງປະທານສະຫະພັນແມ່ຍິງແຂວງ ແລະ ພະແນກຄຸ້ມຄອງສະຖາບັນການເງິນ ເຄື່ອນໄຫວຢ້ຽມຢາມ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກພັດທະນາແມ່ຍິງ ແລະ ຄອບຄົວ ໜ່ວຍບໍລິການເມືອງບໍລິຄັນ ແຂວງບໍລິຄຳໄຊ ສ້າງຕັ້ງຂື້ນ 12 ກໍລະກົດ 2012, ການໃຫ້ບໍລິການສະມາຊິກໃນເບື້ອງຕົ້ນມີພຽງແຕ່ 02 ບ້ານ, ມາຮອດປະຈຸບັນ ໜ່ວຍບໍລິການເມືອງບໍລິຄັນ ໃຫ້ບໍລິການ 18 ບ້ານ ມີສະມາຊິກທັງໝົດ 2.345 ຄົນ, ສະມາຊິກທີ່ເປັນເຍົາວະຊົນ 639 ຄົນ, ມີສະມາຊິກຜູ້ກູ້ຢືມ 523 ຄົນ ຍອດເງິນກູ້ຢືມທັງໝົດ ມູນຄ່າ 2.244.045.000 ກີບ.



**ຮູບພາບ 04** ຢ້ຽມຢາມ ສກຈຮ ພັດທະນາແມ່ຍິງ ແລະ ຄອບຄົວ ໜ່ວຍບໍລິການເມືອງບໍລິຄັນ ແຂວງບໍລິຄຳໄຊ

**ສີສະຫວັນ** ຖ່າຍພາບ **ວັນວິໄລ** ຂ່າວ!